ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ 145 /ຄປຈ.ສພຂ
ຄຳມ່ວນ, ວັນທີ 20 ທັນວາ 2021

# ມະຕິ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ (ສະບັບປັບປຸງ)

- ອີງຕາມ: ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015 ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 82/ສພຊ; ລົງວັນທີ 30 ມິຖຸນາ 2020.
- ອີງຕາມ: ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 12/ສພຊ,ລົງວັນທີ 15 ພະຈິກ 2016.
- ອີງຕາມ: ໜັງສືສະເໜີຂອງຄະນະເລຂາທິການ ສະພາປະຊາຊົນແຂວງຄຳມ່ວນ ສະບັບເລກທີ 780/ຄລຂ.ຄມ, ລົງວັນທີ 10 ທັນວາ 2021.

ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ຍົກສູງປະສິດທິພາບການເຄື່ອນໄຫວປະຕິບັດພາລະບົດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ເຊີດຊູຄວາມຮັບຜິດຊອບຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ຄະນະປະຈຳສະພາປະຊາຊົນແຂວງ ຄຳມ່ວນ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ມະຕິສະບັບນີ້ ກຳນົດຫຼັກການ, ລະບຽບການ, ກົນໄກ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ແມ່ນອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ປະຕິບັດພາລະບົດບາດ ສິດ ແລະ ໜ້າທີ່ ແທນສະພາປະຊາຊົນຂັ້ນແຂວງ ໃນເວລາທີ່ສະພາປະຊາຊົນແຂວງຄຳມ່ວນ ບໍ່ໄດ້ເປີດກອງປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຂຽນຊື່ຫຍໍ້ເປັນຕົວອັກສອນ "**ຄປຈ.ສພຂ**".



สแกนด้วย CamScanner

# ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ນອກຈາກ ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລ້ວ, ຍັງມີສິດ ແລະ ໜ້າທີ່ດັ່ງນີ້:

**ມາດຕາ 3 ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ**

1) ສ້າງແຜນການຕິດຕາມກວດກາຂອງສະພາປະຊາຊົນແຂວງຄຳມ່ວນ ເພື່ອສະເໜີກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຮັບຮອງ;

2) ລາຍງານການເຄື່ອນໄຫວວຽກງານ ປະຈຳ 6 ເດືອນ, ປະຈຳປີ ແລະ ປະຈຳ 5 ປີ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

3) ຊີ້ນຳ ແລະ ຕິດຕາມກວດກາ ຕໍ່ການຈັດຕັ້ງປະຕິບັດວຽກງານ ຂອງບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ;

4) ຊີ້ນຳ ແລະ ຕິດຕາມກວດກາປະເມີນຜົນ ການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ດ້ວຍການໃຫ້ຄະແນນ ໃນເວລາດຳເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ;

5) ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ;

6) ຊຸກຍູ້, ແນະນຳ ແລະ ຕິດຕາມກວດກາການປະຕິບັດໜ້າທີ່ວຽກງານຂອງ ສະມາຊິກສະພາປະຊາຊົນຂັ້ນແຂວງ;

7) ຕາງໜ້າສະພາປະຊາຊົນແຂວງຄຳມ່ວນ ລາຍງານການເຄື່ອນໄຫວວຽກງານຂອງສະພາ ຕໍ່ກອງປະຊຸມອົງການແນວລາວສ້າງຊາດແຂວງ, ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ແລະ ກອງປະຊຸມຄະນະປະຈຳພັກແຂວງ;

8) ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 4 ສິດ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ**

1) ກະກຽມວຽກງານຮອບດ້ານ,ຮຽກໂຮມ ແລະ ຊີ້ນຳການດຳເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ;

2) ຕົກລົງການຍ້ອງຍໍ ຕໍ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານລັດຖະກອນ ຂອງສະພາປະຊາຊົນຂັ້ນແຂວງ;

3) ຕົກລົງການປະຕິບັດວິໄນ ດ້ວຍການກ່າວເຕືອນຕໍ່ສະມາຊິກສະພາປະຊາຊົນແຂວງ ແລະ ໃນກໍລະນີສະມາຊິກສະພາປະຊາຊົນແຂວງ ກະທຳຜິດຮ້າຍແຮງ ຄະນະປະຈຳສະພາປະຊາຊົນແຂວງ ຕ້ອງໄດ້ຄົ້ນຄວ້າເພື່ອສະເໜີກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາການປົດອອກຈາກການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ;

4) ພິຈາລະນາ, ຕົກລົງແຕ່ງຕັ້ງ, ບັນຈຸ, ສັບຊ້ອນ, ການຍົກຍ້າຍ ພະນັກງານລັດຖະກອນ ຂອງສະພາປະຊາຊົນແຂວງ ຕາມການສະເໜີຂອງຄະນະເລຂາທິການສະພາປະຊາຊົນແຂວງ;

5) ຕົກລົງການປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ຕາມການສະເໜີຂອງຄະນະເລຂາທິການສະພາປະຊາຊົນແຂວງ;



สแกนด้วย CamScanner

6) ພິຈາລະນາ, ຮັບຮອງເອົາການສະເໜີຂອງເຈົ້າແຂວງ ເພື່ອແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງເຈົ້າເມືອງ;

7) ແຕ່ງຕັ້ງພະນັກງານອາວຸໂສບໍານານ, ຜູ້ຊົງຄຸນວຸດທິ, ຊ່ຽວຊານທີ່ເປັນຄົນລາວ ສາຂາວິຊາ ສະເພາະດ້ານຕ່າງໆ ເພື່ອໃຫ້ຄໍາເຫັນດ້ານວິຊາການ, ໃຫ້ຄໍາປຶກສາໃນວຽກງານຕ່າງໆ ຂອງສະພາປະຊາຊົນ ຂັ້ນແຂວງ ລວມທັງເປັນວິທະຍາກອນ ຢູ່ກອງປະຊຸມສໍາມະນາຂອງສະພາປະຊາຊົນຂັ້ນແຂວງ;

8) ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຄະນະປະຈໍາພັກແຂວງ, ຕາມກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຕາມກົດໝາຍ.

**ມາດຕາ 5 ສິດ ແລະ ໜ້າທີ່ ຂອງປະທານຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ**

ປະທານຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ເປັນຜູ້ຮັບຜິດຊອບຊີ້ນໍາ-ນໍາພາວຽກງານ ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

2) ເປັນປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

3) ຊີ້ນໍາ-ນໍາພາ, ຕິດຕາມກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານ ຂອງກໍາມະການປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ກົງຈັກທີ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ;

4) ຊຸກຍູ້, ແນະນໍາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ;

5) ປະສານສົມທົບກັບເຈົ້າແຂວງ ແລະ ຫົວໜ້າອົງການອໍານາດລັດຂັ້ນແຂວງ ເພື່ອປຶກສາຫາລືວຽກງານທີ່ສໍາຄັນ ຂອງແຂວງ;

6) ຕາງໜ້າຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ລາຍງານການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຄໍາມ່ວນ ຕໍ່ເລຂາພັກແຂວງ ແລະ ຕໍ່ຄະນະປະຈໍາພັກແຂວງ;

7) ຕາງໜ້າຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ລົງລາຍເຊັນໃສ່ບັນດານິຕິກໍາ, ເອກະສານຕ່າງໆຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ທີ່ໄດ້ຄົ້ນຄ້ວາ ແລະ ພິຈາລະນາຮັບຮອງ;

8) ຕາງໜ້າຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ລົງລາຍເຊັນແຕ່ງຕັ້ງ ແລະ ປົດຕໍາແໜ່ງບໍລິຫານພາຍໃນສະພາປະຊາຊົນຂັ້ນແຂວງ ຂັ້ນຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ;

9) ຕາງໜ້າສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພົວພັນວຽກງານການຕ່າງປະເທດ;

10) ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະປະຈໍາສະພາແຫ່ງຊາດ, ຕາມການມອບໝາຍຂອງເລຂາພັກແຂວງ ແລະ ຄະນະປະຈໍາພັກແຂວງ;

11) ນໍາໃຊ້ສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກໍານົດ.

**ມາດຕາ 6 ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະປະຈໍາສະພາປະຊາຊົນຂັ້ນແຂວງ**

- ຊ່ວຍວຽກປະທານຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ປະຈໍາການແທນ ໃນເວລາປະທານຄະນະປະຈໍາສະພາປະຊາຊົນຊົນຂັ້ນແຂວງ ຕິດຂັດ; ເປັນປະທານກອງປະຊຸມສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ ຕາມການມອບໝາຍຂອງປະທານຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;
- ລົງເລິກຊີ້ນໍາຄະນະກໍາມະການ, ຄະນະເລຂາທິການ ແລະ ກົງຈັກທີ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ຕາມການແບ່ງຄວາມຮັບຜິດຊອບ ພາຍໃນຄະນະປະຈໍາສະພາປະຊາຊົນຂັ້ນແຂວງ.



สแกนด้วย CamScanner

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຊ່ວຍປະທານ ຫຼື ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການປະຕິບັດໜ້າທີ່ວຽກງານລວມຂອງສະພາປະຊາຊົນຂັ້ນແຂວງ, ເປັນປະທານກຳມະການໃດໜຶ່ງ ຫຼື ເປັນເລຂາທິການສະພາປະຊາຊົນຂັ້ນແຂວງ;
- ລາຍງານການປະຕິບັດວຽກງານໃນຂົງເຂດທີ່ຕົນຮັບຜິດຊອບ ຕໍ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ລາຍງານໂດຍກົງຕໍ່ທ່ານປະທານ, ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
- ຊີ້ນຳ-ນຳພາ ແລະ ຮັບຜິດຊອບຢ່າງຮອບດ້ານ ໃນຂອບເຂດວຽກງານຂອງຕົນ;
- ປະສານກັບອົງການອຳນາດລັດຂັ້ນແຂວງ ທີ່ກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານໃນຂອບເຂດ ທີ່ຕົນເອງຮັບຜິດຊອບ;
- ປະຕິບັດວຽກງານອື່ນໆ ຕາມກົດໝາຍທີ່ໄດ້ກຳນົດ;

**ມາດຕາ 8 ສິດ ແລະ ໜ້າທີ່ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ**

ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ ມີໜ່ວຍງານສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ ເຊິ່ງເປັນກົງຈັກເສນາທິການໃຫ້ແກ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ III

## ກອງປະຊຸມ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ

**ມາດຕາ 9 ປະເພດກອງປະຊຸມ**

ກອງປະຊຸມ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກຳນົດເປັນ 3 ປະເພດ ດັ່ງນີ້:

- ກອງປະຊຸມສາມັນ;
- ກອງປະຊຸມວິສາມັນ;
- ກອງປະຊຸມຮ່ວມກັບບັນດາ ອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກພາງ ແລະ ພາກສ່ວນຕ່າງໆ.

**ມາດຕາ 10 ກອງປະຊຸມສາມັນ**

ກອງປະຊຸມສາມັນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈັດຂຶ້ນເດືອນລະຄັ້ງ ໂດຍກຳນົດເອົາອາທິດທີສອງຂອງເດືອນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1) ພິຈາລະນາ, ຮັບຮອງເອົາການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງໃນແຕ່ລະໄລຍະ;

2) ພິຈາລະນາບັນຫາສຳຄັນຕ່າງໆ ຕາມການສະເໜີຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກພາງ;

3) ພິຈາລະນາ, ຮັບຮອງເອົາບົດສະຫຼຸບ ແລະ ແຜນການເຄື່ອນໄຫວວຽກງານປະຈຳ 3 ເດືອນ, 6 ເດືອນ 9 ເດືອນ ແລະ ປະຈຳປີ ຂອງບັນດາຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ ແລະ ບັນດາອົງການຈັດຕັ້ງທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ;

4) ຄົ້ນຄ້ວາ-ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ;



สแกนด้วย CamScanner

5) ກະກຽມ ແລະ ສະຫຼຸບຖອດຖອນບົດຮຽນ ກ່ຽວກັບການດຳເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ;

6) ຄົ້ນຄວ້າ-ພິຈາລະນາຮັບຮອງ ຮ່າງແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງອົງການອຳນາດລັດ ຂັ້ນແຂວງ;

7) ຄົ້ນຄວ້າ-ພິຈາລະນາຮັບຮອງ ຮ່າງນິຕິກຳ ຂອງອົງການອຳນາດລັດຂັ້ນແຂວງ ທີ່ໄດ້ດຳເນີນການຕາມບາດກ້າວຂັ້ນຕອນຂອງການສ້າງ ແລະ ປັບປຸງນິຕິກຳ ເພື່ອນຳເຂົ້າພິຈາລະນາຮັບຮອງໃນວາລະກອງປະຊຸມສະພາປະຊາຊົນຂັ້ນແຂວງ;

8) ພິຈາລະນາການຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງເລຂາທິການສະພາປະຊາຊົນແຂວງ;

9) ພິຈາລະນາ, ຮັບຮອງເອົາການບັນຈຸ, ສັບຊ້ອນ, ຍົກຍ້າຍ, ການປະຕິບັດນະໂຍບາຍ, ການປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນຂອງສະພາປະຊາຊົນຂັ້ນແຂວງ;

10) ຄົ້ນຄ້ວາ, ພິຈາລະນາ, ຮັບຮອງ ວຽກງານອື່ນໆ ຕາມການຕົກລົງເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

### ມາດຕາ 11 ກອງປະຊຸມວິສາມັນ

ກອງປະຊຸມວິສາມັນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດຳເນີນຂຶ້ນ ຕາມການຕົກລົງຂອງປະທານ ຫຼື ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ ຫຼື ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງໜ້ອຍ 2/3 ຂອງຈຳນວນຄະນະປະຈຳສະພາປະຊາຊົນຂັ້ນແຂວງທັງໝົດ, ເພື່ອພິຈາລະນາ ວຽກງານສຳຄັນ, ຮີບດ່ວນ ຂອງອົງການອຳນາດລັດຂັ້ນແຂວງ.

### ມາດຕາ 12 ກອງປະຊຸມຮ່ວມ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈັດກອງປະຊຸມຮ່ວມກັບ ອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກກາງ ແລະ ພາກສ່ວນຕ່າງໆ ຢ່າງໜ້ອຍປີລະສອງຄັ້ງ;

1) ກອງປະຊຸມຮ່ວມກັບອົງການປົກຄອງແຂວງ ເຊິ່ງກຳນົດເນື້ອໃນຕົ້ນຕໍ ດັ່ງນີ້:

- ຮັບຟັງການລາຍງານສະພາບການ, ປຶກສາຫາລື ແລະ ຕົກລົງດ້ານນະໂຍບາຍ, ມາດຕະການ ແລະ ວິທີການແກ້ໄຂຕໍ່ບັນຫາສຳຄັນຮີບດ່ວນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ການບໍລິຫານລັດຂັ້ນແຂວງ ແລະ ອື່ນໆ;
- ຮັບຟັງການລາຍງານ ກ່ຽວກັບບົດສະຫລຸບການເຄື່ອນໄຫວປະຈຳ 6 ເດືອນ, ປະຈຳປີ ແລະ ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ;
- ປຶກສາຫາລື ແລະ ສ້າງຄວາມເປັນເອກະພາບ ຕໍ່ເນື້ອໃນທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

2) ກອງປະຊຸມຮ່ວມກັບອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ເຊິ່ງກຳນົດເນື້ອໃນຕົ້ນຕໍ ດັ່ງນີ້:

- ຮັບຟັງການລາຍງານ ກ່ຽວກັບບົດສະຫລຸບການເຄື່ອນໄຫວປະຈຳ 6 ເດືອນ, ປະຈຳປີ ແລະ ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ;
- ຮັບຟັງການລາຍງານ ກ່ຽວກັບການປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ



สแกนด้วย CamScanner

3) ກອງປະຊຸມຮ່ວມກັບອົງການກວດສອບປະຈຳພາກພາກ ແລະ ອົງການກວດກາລັດແຂວງ ເຊິ່ງກຳນົດເນື້ອໃນຕົ້ນຕໍ ດັ່ງນີ້:

- ຮັບຟັງການລາຍງານ ກ່ຽວກັບບົດສະຫລຸບການເຄື່ອນໄຫວປະຈຳປີ ແລະ ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ;

- ຮັບຟັງການລາຍງານຜົນການກວດສອບ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ ແລະ ການຈັດຕັ້ງປະຕິບັດວຽກງານໃດໜຶ່ງຂອງອົງການກວດສອບປະຈຳພາກພາກ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

- ຮັບຟັງລາຍງານການແກ້ໄຂຜົນການກວດກາ ຕາມຜົນການກວດສອບ ທີ່ເຫັນວ່າມີຄວາມສະລັບສັບຊ້ອນ ແລະ ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ.

ໃນກໍລະນີຈຳເປັນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດຳເນີນກອງປະຊຸມຮ່ວມກັບພາກສ່ວນອື່ນກໍ່ໄດ້ ໂດຍສະເພາະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ອົງການແນວລາວສ້າງຊາດແຂວງ ແລະ ພາກສ່ວນຕ່າງໆກ່ຽວຂ້ອງ.

## ມາດຕາ 13 ລະບຽບການກະກຽມເນື້ອໃນ ແລະ ດຳເນີນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ບັນດາກຳມະການ, ຄະນະເລຂາທິການ ຂອງສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງມີໜ້າທີ່ຮັບຜິດຊອບກະກຽມເນື້ອໃນ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມຂັ້ນຕອນດັ່ງນີ້:

1) ຄະນະກຳມະການ, ຄະນະເລຂາທິການ ທີ່ໄດ້ຮັບການມອບໝາຍກະກຽມເນື້ອໃນເອກະສານກອງປະຊຸມ ຕ້ອງເປັນເຈົ້າການຄົ້ນຄ້ວາ, ປະສານສົມທົບໃນການເກັບກຳຂໍ້ມູນເພື່ອສະຫຼຸບສັງລວມເນື້ອໃນດັ່ງກ່າວ ແລະ ນຳເຂົ້າພິຈາລະນາຢູ່ກອງປະຊຸມພາຍໃນຄະນະຂອງຕົນ. ພາຍຫລັງມີຄວາມເປັນເອກະພາບແລ້ວໃຫ້ນຳລາຍງານຂໍທິດຊີ້ນຳຈາກທ່ານ ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຜູ້ຊີ້ນຳວຽກງານຂົງເຂດຕົນ, ຈາກນັ້ນໃຫ້ສົ່ງບົດລາຍງານການຄົ້ນຄ້ວາ ແລະ ເອກະສານທັງໝົດ ໃຫ້ຄະນະເລຂາທິການສະພາປະຊາຊົນແຂວງ ກ່ອນມື້ເປີດກອງປະຊຸມ 05 ວັນ ເພື່ອກຳນົດ ເຂົ້າໃນວາລະກອງປະຊຸມ;

2) ຄະນະເລຂາທິການສະພາປະຊາຊົນແຂວງ ຕ້ອງສົ່ງເອກະສານກອງປະຊຸມໃຫ້ເປົ້າໝາຍຕ່າງໆທີ່ເຂົ້າຮ່ວມ ກອງປະຊຸມ ກ່ອນ 03 ວັນເປັນຢ່າງຊ້າ ເພື່ອມີເວລາຄົ້ນຄ້ວາປະກອບຄຳເຫັນ ຕໍ່ເນື້ອໃນ ດັ່ງກ່າວ;

3) ບັນດາເນື້ອໃນເອກະສານທີ່ຈະນຳມາລາຍງານຢູ່ກອງປະຊຸມ ຕ້ອງແມ່ນປະທານ ຫຼື ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ ຫຼື ຮອງຫົວໜ້າຂອງອົງການລັດທຽບເທົ່າຂັ້ນແຂວງ ຫຼື ບຸກຄົນອື່ນຕາມການອະນຸຍາດ ຂອງປະທານຄະນະປະຈຳສະພາປະຊາຊົນແຂວງ. ເນື້ອໃນລາຍງານ ຕ້ອງສັງລວມໃຫ້ສັ້ນ,ຈະແຈ້ງ, ເປັນບັນຫາທີ່ຂໍການຕົກລົງຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ: ຂໍ້ສະເໜີ, ວິທີການ, ມາດຕະການແກ້ໄຂ ແລະ ອື່ນໆ;

4) ຄະນະເລຂາທິການສະພາປະຊາຊົນແຂວງ ມີໜ້າທີ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທີ່ນຳເອົາຫົວຂໍ້ ເນື້ອໃນເຂົ້າພິຈາລະນາ ເພື່ອກະກຽມເອກະສານໃຫ້ປະທານກອງປະຊຸມເຊັ່ນ: ຄຳເຈາະຈີ້ມ, ບົດສະຫຼຸບສັງລວມຄວາມເຫັນຕາມການຕົກລົງຂອງກອງປະຊຸມ ແລະ ເອກະສານອື່ນໆ ຕາມການຊີ້ນຳຂອງປະທານກອງປະຊຸມ;

5) ການປະກອບຄຳເຫັນ ຕ້ອງໃຫ້ເຂົ້າສູ່ເປົ້າໝາຍ ແລະ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ, ມີເຫດຜົນໃນການເຫັນດີ ຫຼື ບໍ່ເຫັນດີ. ຫຼີກເວັ້ນຄຳເຫັນທີ່ຍືດຍາວ, ຄຸມເຄືອ ແລະ ບໍ່ມີຈຸດສຸມເຮັດໃຫ້ກອງປະຊຸມແກ່ຍາວ;

6) ເພື່ອຮັບປະກັນໃຫ້ກອງປະຊຸມດຳເນີນໄປຕາມວາລະທີ່ໄດ້ກຳນົດ, ປະທານກອງປະຊຸມຕ້ອງເຂັ້ມງວດໃນການບັນຊາ, ມີການເຈາະຈີ້ມ ແລະ ຊຸກຍູ້ການປະກອບຄວາມເຫັນໃຫ້ເຂົ້າສູ່ບັນຫາ;



สแกนด้วย CamScanner

7) ເວລາດຳເນີນກອງປະຊຸມ ບໍ່ອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ນຳເອົາບັນຫາທີ່ບໍ່ກ່ຽວຂ້ອງກັບເນື້ອໃນ ທີ່ກຳນົດໃນວາລະກອງປະຊຸມ ຍົກຂຶ້ນມາປຶກສາຫາລື ໂດຍບໍ່ໄດ້ຮັບອະນຸຍາດຈາກປະທານກອງປະຊຸມ;

8) ຄະນະເລຂາທິການສະພາປະຊາຊົນແຂວງ ເປັນເຈົ້າການບັນທຶກ ແລະ ຮ່າງບົດບັນທຶກກອງປະຊຸມ ໃຫ້ສຳເລັດຢ່າງຊ້າບໍ່ເກີນ 3 ວັນ, ພາຍຫຼັງສຳເລັດກອງປະຊຸມ ຈາກນັ້ນ; ປະສານສົມທົບກັບບັນດາຄະນະກຳມະການ ແລະ ພາກສ່ວນກ່ຽວຂ້ອງ ທີ່ຮັບຜິດຊອບກະກຽມເອກະສານຕ່າງໆເຊັ່ນ: ຮ່າງມະຕິ, ແຈ້ງການ, ຄຳແນະນຳ ແລະ ອື່ນໆ ໃຫ້ສຳເລັດພາຍໃນ 2 ວັນ ພາຍຫຼັງກອງປະຊຸມໄດ້ຕົກລົງ ແລະ ສົ່ງໃຫ້ຄະນະເລຂາທິການສະພາປະຊາຊົນແຂວງ ເພື່ອດຳເນີນຂັ້ນຕອນຕໍ່ໄປ;

9) ຄະນະເລຂາທິການສະພາປະຊາຊົນແຂວງ ຈັດຕັ້ງການຖະແຫຼງຂ່າວ ແລະ ອອກຄຳແນະນຳກ່ຽວກັບການຈັດຕັ້ງຜັນຂະຫຍາຍຜົນສຳເລັດ ຂອງກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນແຕ່ລະຄັ້ງ.

### ມາດຕາ 14 ເປົ້າໝາຍເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອາດດຳເນີນຕາມຮູບການແບບເປີດກ້ວາງ ຫຼື ດຳເນີນການສະເພາະຕາມແຕ່ລະກໍລະນີ. ໃນກໍລະນີ ການດຳເນີນກອງປະຊຸມແບບເປີດກ້ວາງ ອາດເຊີນຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12, ຮອງປະທານຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ ຫຼື ຮອງຫົວໜ້າຂະແໜງ ຂອງສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນໆ ເຂົ້າຮ່ວມໄດ້ຕາມການຕົກລົງຂອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

## ໝວດທີ IV

## ລະບອບແບບແຜນວິທີເຮັດວຽກ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ

### ມາດຕາ 15 ລະບອບແບບແຜນວິທີເຮັດວຽກ

1) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະຕິບັດລະບອບແບບແຜນວິທີເຮັດວຽກຕາມລະບຽບການ, ແຜນດຳເນີນງານ, ແຜນການໃນແຕ່ລະໄລຍະ, ປະຕິບັດລະບອບການເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ປຶກສາຫາລືຜ່ານກອງປະຊຸມ, ພິຈາລະນາ ແລະ ຮັບຮອງເອົາເນື້ອໃນຕາມສຽງສ່ວນຫຼາຍ, ມີຄວາມຮັບຜິດຊອບ ໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃຫ້ມີຜົນສຳເລັດຕາມຄາດໝາຍ.

2) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດຳເນີນໜ້າທີ່ວຽກງານດ້ວຍລະບອບປະຊຸມ, ມີການແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການຕິດຕາມກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆພາຍໃນສະພາປະຊາຊົນຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ.

### ມາດຕາ 16 ການປະສານງານ

ການປະສານງານຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີດັ່ງນີ້:

**1) ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະປະຈຳສະພາແຫ່ງຊາດ ເປັນຕົ້ນ:**

- ການສ້າງນິຕິກຳ, ການປັບປຸງກົດໝາຍ ແລະ ນິຕິກຳ ດ້ວຍການນຳເອົາຮ່າງກົດໝາຍລົງມາຫາຍທາມກັບກຸ່ມເປົ້າໝາຍທີ່ພົວພັນ, ເຜີຍແຜ່ກົດໝາຍ ໂດຍມີການປະສານສົມທົບຊຶ່ງກັນ ແລະ ກັນ;

- ຂໍທິດຊີ້ນຳ ໃນການຍົກເລີກການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍ ຂອງອົງປົກຄອງແຂວງ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;



สแกนด้วย CamScanner

- ມີການປະສານສົມທົບໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຢູ່ທ້ອງຖິ່ນ;

- ຊີ້ທິດຊີ້ນຳໃນການກະກຽມເນື້ອໃນສຳຄັນເພື່ອຮັບປະກັນຄວາມເປັນເອກະພາບຂອງສູນກາງ ແລະ ທ້ອງຖິ່ນ ໃນການສ້າງແຜນການ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ສອດຄ່ອງກັບແນວທາງ ນະໂຍບາຍ ຂອງພັກ, ກົດໝາຍຂອງລັດ, ບັນດານິຕິກຳ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງ ສະພາປະຊາຊົນແຂວງ ສາມາດເສີມຂະຫຍາຍທ່າແຮງຂອງທ້ອງຖິ່ນ ເຊັ່ນ: ແຜນພັດທະນາ ເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ທີ່ປະຕິບັດຢູ່ພາຍໃນແຂວງ ແລະ ອື່ນໆ;

- ປະສານສົມທົບເພື່ອຊ່ວຍຍົກລະດັບດ້ານວິຊາການ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວິຊາການຊົງເຂດຕ່າງໆ ຂອງສະພາປະຊາຊົນຂັ້ນແຂວງ;

2) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ເປັນຕົ້ນ:

- ປະສານທົມທົບການທາບທາມຮ່າງກົດໝາຍ, ບັນດານິຕິກຳໃຕ້ກົດໝາຍ ແລະ ການໂຄສະນາເຜີຍແຜ່ ກົດໝາຍ, ບັນດານິຕິກຳລຸ່ມກົດໝາຍ;

- ມີການປະສານສົມທົບໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍມະຕິ ຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນຂັ້ນແຂວງ ຢູ່ທ້ອງຖິ່ນ;

- ປະສານສົມທົບໃນການຄົ້ນຄ້ວາ, ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ.

3) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກັບຄະນະປະຈຳພັກແຂວງ ເປັນຕົ້ນ:

- ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີຄະນະປະຈຳພັກແຂວງ ເພື່ອອອກມະຕິຕົກລົງວຽກງານ ໃດໜຶ່ງ ແລະ ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ;

- ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະສານສົມທົບກັບຄະນະປະຈຳພັກແຂວງ ເພື່ອນຳສະເໜີການ ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານສານປະຊາຊົນແຂວງ, ປະທານອົງການກວດກາລັດແຂວງ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

4) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກັບອົງການປົກຄອງແຂວງ ເປັນຕົ້ນ:

- ອົງການປົກຄອງແຂວງ ສະເໜີຮ່າງນິຕິກຳ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແຫ່ງລັດຂອງແຂວງ ແລະ ບັນຫາສຳຄັນອື່ນໆຂອງແຂວງ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ ຕົກລົງຮັບຮອງ ຫຼື ພິຈາລະນາ ກ່ອນນຳເຂົ້າໃຫ້ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງ;

- ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຊຸກຍູ້ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ;

5) ຄະນະປະຈຳສະພາປະຊາຊົນແຂວງ ກັບຄະນະປະສານງານປົກປ້ອງກົດໝາຍ ເຊິ່ງກຳນົດເນື້ອໃນຕົ້ນຕໍດັ່ງນີ້:

- ລາຍງານສະພາບການ, ປຶກສາຫາລື, ຕົກລົງມາດຕະການ ແລະ ວິທີການແກ້ໄຂ ຕໍ່ບັນຫາຮີບດ່ວນ ໃນການຈັດຕັ້ງປະຕິບັດວຽກງານ ຂອງຄະນະປະສານງານປົກປ້ອງກົດໝາຍ;

- ລາຍງານກ່ຽວກັບການປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ;

6) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກັບອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ເປັນຕົ້ນ:

- ແຕ່ລະອົງການສະເໜີຮ່າງນິຕິກຳ ໃຫ້ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ ກ່ອນນຳເຂົ້າຮັບຮອງ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ;



สแกนด้วย CamScanner

- ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ບັນດານິຕິກຳ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຂອງແຕ່ລະອົງການ;

7) ຄະນະປະຈຳສະພາປະຊາຊົນແຂວງ ກັບແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າແຂວງ ແລະ ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ເປັນຕົ້ນ:

- ແຕ່ລະອົງການສະເໜີຮ່າງນິຕິກຳ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາກ່ອນນຳເຂົ້າໃຫ້ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຄົ້ນຄ້ວາ-ພິຈາລະນາ, ຮັບຮອງ;

- ຮ່ວມກັນກະກຽມ ແລະ ເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ;

- ບັນດາອົງການເຫລົ່ານີ້ ປະຕິບັດໜ້າທີ່ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

- ປະສານງານວຽກງານອື່ນໆ ຕາມການສະເໜີ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ອົງການກ່ຽວຂ້ອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 17 ຕາປະທັບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.**

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ມີຕາປະທັບສະເພາະ, ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ຢູ່ເບື້ອງລຸ່ມຂຽນວ່າ "ຄະນະປະຈຳສະພາປະຊາຊົນແຂວງ ຄຳມ່ວນ" ແລະ ຂັ້ນດ້ວຍຮູບ ດາວຫ້າແຈ.

**ມາດຕາ 18 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ບັນດາອົງການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງທີ່ຄະນະປະຈຳສະພາປະຊາຊົນແຂວງ ສ້າງຕັ້ງ ມີໜ້າທີ່ປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ມະຕິສະບັບນີ້ປ່ຽນແທນມະຕິ ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 27/ຄປຈ.ສພຂ; ລົງວັນທີ 11 ຕຸລາ 2016 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ**

**ປະທານ**



สแกนด้วย CamScanner